ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ພິທີມອບເງິນຊ່ວຍເຫຼືອຈາກ ຢູນຽນເພ ສາກົນ ເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ເມືອງ ສະໜາມໄຊ ແຂວງອັດຕະປື ຜ່ານ BCEL OneHeart

ທີ່ ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2018

ໃນວັນອັງຄານ ວັນທີ 30 ຕຸລາ 2018 ທີ່ສຳນັກງານໃຫຍ່ ທຄຕລ ໄດ້ຈັດພິທີມອບເງິນຊ່ວຍເຫຼືອຈາກ ຢູນຽນເພ ສາກົນ ເພື່ອຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ທີ່ ແຂວງ ອັດຕະປື ຜ່ານລະບົບ OneHeart ຂອງ ທຄຕລ ຈານວນ **87.000.000 ກີບ (ແປດສິບເຈັດລ້ານກີບຖ້ວນ)**. ຕ່າງໜ້າຮັບໂດຍ ທ່ານ ບັນທະລາດ ແກ້ວປະເສີດ, ຮອງຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ພາຍໃຕ້ການເຂົ້າຮ່ວມຂອງ ຜູ້ຕາງໜ້າຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ພ້ອມດ້ວຍຄະນະອຳນວຍການ, ຄະນະພະແນກ-ສູນ, ພະນັກງານ ທຄຕລ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.




2012 ເປັນຕົ້ນມາ. ເຊິ່ງການຮ່ວມມືຂອງທັງສອງຝ່າຍນັ້ນແມ່ນໄດ້ເຮັດໃຫ້ ທຄຕລ ມີຜະລິດຕະພັນ ແລະ ການບໍລິການຄື: ການປ່ຽນບັດ BCEL ATM ທີ່ສາມາດໃຊ້ໄດ້ແຕ່ພາຍໃນໃນເມື່ອກ່ອນ ມາເປັນບັດ BCEL UnionPay ATM ທີ່ສາມາດໃຊ້ໄດ້ທັງພາຍໃນ ແລະ ຕ່າງປະເທດ. ນອກຈາກການອອກບັດເອທີເອັມ ແລະ ບັດຢູນຽນເພແລ້ວ ຍັງມີການຮ່ວມມືກັນອອກບັດນັກສຶກສາຂອງມະຫາວິທະຍາໄລແຫ່ງຊາດ ແລະ ວິທະຍາໄລຕ່າງໆ ໃນຂອບເຂດ ທົ່ວປະເທດ. ລູກຄ້າ ທຄຕລ ແມ່ນສາມາດນຳໃຊ້ບັດແທນເງິນສົດ ແລະ ຍັງສາມາດໃຊ້ບັດ BCEL UnionPay ATM ໃນການຊາລະສິນຄ້າຕ່າງໆຢູ່ຕ່າງປະເທດ ໄດ້ຢ່າງສະດວກສະບາຍ ແລະ ປອດໄພ.

ໜຶ່ງໃນຄຸນຄ່າຫຼັກຂອງສູນບັດສາກົນຢູນຽນເພແມ່ນ "ການແບ່ງປັນການເຕີບໂຕ", ແຮງບັນດານໃຈຂອງບໍລິສັດ ແມ່ນເພື່ອສ້າງຜົນປະໂຫຍດຮ່ວມກັນໃຫ້ແກ່ທຸກຝ່າຍ ແລະ ໄດ້ຮັບໝາກຜົນເທົ່າກັນສຳລັບຄູ່ຮ່ວມກັບຄູ່ຮ່ວມທຸລະກິດ (win-win) ໂດຍສະເພາະແມ່ນຄູ່ຮ່ວມທຸລະກິດທີ່ຢູ່ໃນປະເທດນັ້ນໆ ໃນນັ້ນທີ່ໂດດເດັ່ນແມ່ນການໃຫ້ການຊ່ວຍເຫລືອສັງຄົມ. ເຊິ່ງຜ່ານມາ, ທາງຢູນຽນເພໄດ້ໃຫ້ການບໍລິຈາກ, ຮ່ວມເຄື່ອນໄຫວວຽກງານປົກປັກຮັກສາສິ່ງແວດລ້ອມ, ການກໍ່ສ້າງສິ່ງອຳນວຍຄວາມສະດວກເພື່ອສັງຄົມ ແລະ ເຮັດວຽກງານອາສາສະໝັກເພື່ອຊ່ວຍເຫລືອສັງຄົມ ໃນຫລາຍໆຕະຫລາດໃນບັນດາປະເທດໃນເອເຊຍ.

ໂອກາດນີ້ຂໍຮຽນຕາງໜ້າຜູ້ປະສົບໄພ ສະແດງຄວາມຂອບໃຈມາຍັງ ສູນບັດສາກົນ ຢູນຽນເພ ທີ່ໄດ້ຮ່ວມບໍລິຈາກຊ່ວຍຜູ້ປະສົບໄພພິບັດນໍ້າຖ້ວມ ທີ່ ແຂວງ ອັດຕະປື ຜ່ານ BCEL OneHeart ໃນຄັ້ງນີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la